**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງຍຸຕິທຳ ເລກທີ 088 /ກຍ

ນະຄອນຫຼວງວຽງຈັນ, ວັນທີ 28 ມັງກອນ 2025

# ຂໍ້ຕົກລົງ
## ວ່າດ້ວຍການຮັບຮອງເອົາບັນດາບໍລິສັດປະເມີນມູນຄ່າຊັບສິນ ເຂົ້າໃນການປະຕິບັດຄຳຕັດສິນຂອງສານ

- ອີງຕາມ ກົດໝາຍ ວ່າດ້ວຍການປະຕິບັດຄຳຕັດສິນຂອງສານ ສະບັບເລກທີ 12/ສພຊ, ລົງວັນທີ 17 ພະຈິກ 2021;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງຍຸຕິທຳ ສະບັບເລກທີ 601/ກຍ, ລົງວັນທີ 14 ຕຸລາ 2021;
- ອີງຕາມ ການສະເໜີ ຂອງກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ.

**ລັດຖະມົນຕີ ຕົກລົງ:**

**ມາດຕາ 1** ເຫັນດີຮັບຮອງເອົາບໍລິສັດປະເມີນມູນຄ່າຊັບສິນ ເພື່ອໃຫ້ບໍລິການຕີລາຄາຊັບໃນວຽກງານປະຕິບັດຄຳຕັດສິນຂອງສານ ຊຶ່ງມີລາຍຊື່ ດັ່ງນີ້:

1. ບໍລິສັດ ເອເຊຍໂລຕັດ ປະເມີນມູນຄ່າຊັບສິນ ຈຳກັດ;
2. ບໍລິສັດ ລາວວາລູປະເມີນມູນຄ່າຊັບສິນ ຈຳກັດຜູ້ດຽວ;
3. ບໍລິສັດ ເຄເຄ ລາວປະເມີນມູນຄ່າຊັບສິນ ຈຳກັດ;
4. ບໍລິສັດ ປະເມີນມູນຄ່າຊັບສິນ ຈີເອັສ ລາວຈຳກັດ;
5. ບໍລິສັດ ລາວປະເມີນຊັບສິນ ຈຳກັດ;
6. ບໍລິສັດ ລິດແອັບໄພຣໂຊ ຈຳກັດ.

**ມາດຕາ 2** ມອບໃຫ້ ອົງການປະຕິບັດຄຳຕັດສິນຂອງສານ ສ້າງບັນຊີລາຍຊື່ບໍລິສັດປະເມີນມູນຄ່າຊັບສິນ ແລະ ນຳໃຊ້ບໍລິສັດດັ່ງກ່າວເຂົ້າໃນການຕີລາຄາຊັບໃນວຽກປະຕິບັດຄຳຕັດສິນຂອງສານຕາມລະບຽບການ.

ໃຫ້ບັນດາບໍລິສັດ ສາມາດເຄື່ອນໄຫວໃຫ້ບໍລິການຕີລາຄາຊັບໃນວຽກງານປະຕິບັດຄຳຕັດສິນຂອງສານຕາມຂອບເຂດສິດ ແລະ ຄວາມຮັບຜິດຊອບ ຕາມຂໍ້ຕົກລົງ ສະບັບເລກທີ 2017/ກຍ, ລົງວັນທີ 20 ພະຈິກ 2024 ວ່າດ້ວຍການຄຸ້ມຄອງບໍລິສັດປະເມີນມູນຄ່າຊັບສິນໃນການປະຕິບັດຄຳຕັດສິນຂອງສານ.

**ມາດຕາ 3** ໃຫ້ ຫ້ອງການ, ບັນດາກົມ, ສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ, ສະຖາບັນຍຸຕິທຳແຫ່ງຊາດ, ສະພາທະນາຍຄວາມແຫ່ງ ສປປ ລາວ, ກອງ, ຫ້ອງປະຕິບັດຄຳຕັດສິນຂອງສານ ພະແນກຍຸຕິທຳແຂວງ, ຫ້ອງການຍຸຕິທຳເມືອງ, ບໍລິສັດປະເມີນມູນຄ່າຊັບສິນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 4** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີ**

ກະຊວງຍຸຕິທຳ
ລັດຖະມົນຕີ

ໄພວີ ສີບົວລິພາ